ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ: 465/ທຫລ

ນະຄອນຫຼວງວຽງຈັນ, ວັນທີ: 08 DEC 2016

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານທຸລະກິດ ທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ຮ້ານແລກປ່ຽນເງິນຕາ.

**ເລື່ອງ:** ການດໍາເນີນທຸລະກໍາດັດສົມສະພາບຄ່ອງເງິນຕາຕ່າງປະເທດ ໂດຍຜ່ານການປະມູນຢູ່ທະນາຄານແຫ່ງ ສປປ ລາວ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.

## ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ ດັ່ງນີ້:

**ມາດຕາ 1** ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ໃຫ້ຊື້-ຂາຍເງິນຕາກັບ ທຫລ ໂດຍຜ່ານການປະມູນຢູ່ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ (ທຫລ).

**ມາດຕາ 2** ກົນໄກການປະມູນຢູ່ກົມບໍລິການທະນາຄານ ມີຄື:

1. ກ່ອນຂໍເຂົ້າຮ່ວມປະມູນຊື້-ຂາຍເງິນຕາ ຢູ່ກົມບໍລິການທະນາຄານ ເພື່ອດັດສົມສະພາບຄ່ອງເງິນຕາ ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຕ້ອງໄດ້ຜ່ານການເຂົ້າດໍາເນີນການຊື້-ຂາຍເງິນຕາໃນຕະຫຼາດລະຫວ່າງທະນາຄານ ເຊິ່ງຕະຫຼາດດັ່ງກ່າວເປີດດໍາເນີນທຸລະກໍາ ຕາມກອບໄລຍະເວລາທີ່ ທຫລ ກໍານົດຄື:
   - ຕອນເຊົ້າ ແຕ່ເວລາ 9:00-10:00 ໂມງ;
   - ຕອນບ່າຍ ແຕ່ເວລາ 13:00-14:00 ໂມງ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ການປະມູນຊື້-ຂາຍເງິນຕາມີປະສິດທິຜົນສູງ, ທຫລ ຈະເປັນເຈົ້າການໃນການຈັບຄູ່ທຸລະກໍາ ໃນຕະຫຼາດລະຫວ່າງທະນາຄານ ໃຫ້ຜູ້ສະເໜີຊື້-ຂາຍທີ່ມີອັດຕາແລກປ່ຽນ ແລະ ຈໍານວນເງິນສອດຄ່ອງກັນ ຫຼື ໃກ້ຄຽງກັນທີ່ສຸດ.

2. ພາຍຫຼັງດຳເນີນທຸລະກຳ ຢູ່ຕະຫຼາດລະຫວ່າງທະນາຄານແລ້ວ ແຕ່ບໍ່ສາມາດຈັບຄູ່ໄດ້, ທຫລ ອະນຸຍາດໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ເຂົ້າດຳເນີນທຸລະກຳດັດສົມສະພາບຄ່ອງເງິນຕາຕ່າງປະເທດ ດ້ວຍຮູບການປະມູນຢູ່ກົມບໍລິການທະນາຄານ ແຕ່ເວລາ 14:00 - 15:00 ໂມງ.

3. ກົມບໍລິການທະນາຄານ ຈະພິຈາລະນາຜູ້ຊະນະການປະມູນ ຕາມອັດຕາແລກປ່ຽນ ແລະ ຈຳນວນເງິນທີ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ສະເໜີປະມູນເຂົ້າມາ, ພ້ອມທັງແຈ້ງຜົນການປະມູນໃຫ້ຊາບ ແລະ ດຳເນີນການຊຳລະສະສາງ ພາຍຫຼັງປິດຮັບຄຳສັ່ງປະມູນ ແຕ່ເວລາ 15:01-15:30 ໂມງ.

**ມາດຕາ 3** ຜູ້ເຂົ້າຮ່ວມການປະມູນຕ້ອງມີເງື່ອນໄຂ ດັ່ງນີ້:

1. ຜ່ານການເຂົ້າດຳເນີນການຊື້-ຂາຍຢູ່ຕະຫຼາດລະຫວ່າງທະນາຄານ;

2. ດັດສົມຖານະເງິນຕາຕ່າງປະເທດສຸດທິ (NOP) ຂາດ ຫຼື ເກີນດຸນຕາມທີ່ ທຫລ ກຳນົດໄວ້ໃນລະບຽບການໃນແຕ່ລະໄລຍະ;

3. ໄດ້ຊື້-ຂາຍເງິນຕາໃຫ້ແກ່ລູກຄ້າ;

4. ມີເອກະສານຢັ້ງຢືນການຊື້-ຂາຍເງິນຕາ ການຊື້-ຂາຍເງິນຕາຄົບຖ້ວນ, ປະກອບເອກະສານ ຢັ້ງຢືນຕາມເປົ້າໝາຍການນຳໃຊ້ເງິນຕາ ທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລ້ວນຳສົ່ງເອກະສານດັ່ງກ່າວ ມາຍັງກົມບໍລິການທະນາຄານ ກ່ອນການປະມູນເປັນຕົ້ນ:

- ໃບສະເໜີຂໍຊື້ເງິນຕາຂອງລູກຄ້າເຖິງທະນາຄານທຸລະກິດ;
- ໃບທະບຽນວິສາຫະກິດຂອງລູກຄ້າຜູ້ຂໍຊື້ເງິນຕາ;
- ໃບສະເໜີຂໍໂອນເງິນອອກຕ່າງປະເທດ ພ້ອມເລກບັນຊີຂອງລູກຄ້າຢູ່ທະນາຄານທຸລະກິດຕົ້ນ ຫຼື/ແລະ ບັນຊີທີ່ຈະຊຳລະສະສາງຢູ່ຕ່າງປະເທດ;
- ໃບເສຍພາສີອາກອນປະຈຳປີຂອງລູກຄ້າຜູ້ຂໍຊື້ເງິນຕາ;
- ໃບ Invoice ລາຄາຂອງສິນຄ້າ ທີ່ຂໍຊື້ເງິນຕາເພື່ອໄປຊຳລະ;
- ໃບ SWIFT ໂອນເງິນ ແລະ ໃບຢັ້ງຢືນການໂອນເງິນຂອງທະນາຄານທີ່ຂໍຊື້ເງິນຕາ;
- ແລະ ເອກະສານອື່ນໆທີ່ ທຫລ ເຫັນວ່າມີຄວາມຈຳເປັນ.

ນອກຈາກນີ້, ຈຳນວນເງິນໃນບັນດາເອກະສານ ທີ່ລະບຸໄວ້ຂ້າງເທິງຕ້ອງກົງກັນ ແລະ ເອກະສານປະກອບໜຶ່ງຊຸດສາມາດນຳໃຊ້ໄດ້ພຽງຄັ້ງດຽວ.

5. ຮ້ານແລກປ່ຽນເງິນຕາ ໃຫ້ດຳເນີນການປະມູນຕາມທຶນຈົດທະບຽນ ແລະ ຕ້ອງສະໜອງເອກະສານທີ່ກ່ຽວຂ້ອງກັບການຊື້-ຂາຍເງິນຕາກັບລູກຄ້າໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຢ່າງຄົບຖ້ວນ.

**ມາດຕາ 4** ການຊຳລະສະສາງ

1. ກົມບໍລິການທະນາຄານ ບໍ່ອະນຸຍາດໃຫ້ຜູ້ຊະນະການປະມູນ ຖອນເງິນສົດເງິນຕາຕ່າງປະເທດ ແຕ່ຈະດຳເນີນການຊຳລະສະສາງທາງບັນຊີອັດຕະໂນມັດ ພາຍຫຼັງປະກາດຜູ້ຊະນະການປະມູນ ດັ່ງນີ້:

- ກໍລະນີການປະມູນຊື້ເງິນຕາ ເພື່ອທົດແທນການຂາຍເງິນຕາໃຫ້ລູກຄ້າ, ຈຳນວນເງິນຈະຖືກໂອນເຂົ້າບັນຊີຂອງທະນາຄານທຸລະກິດຜູ້ຊະນະການປະມູນ.
- ກໍລະນີຂາຍເງິນຕາໃຫ້ທະນາຄານແຫ່ງ ສປປ ລາວ, ກົມບໍລິການທະນາຄານ ຈະຕັດບັນຊີເງິນຕາສະກຸນທີ່ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ຂາຍໃຫ້ແກ່ ທຫລ ແລ້ວໂອນເງິນກີບເຂົ້າບັນຊີໃຫ້ແກ່ຜູ້ສະເໜີຂາຍ.

- ການຊຳລະສະສາງສຳລັບຮ້ານແລກປ່ຽນເງິນຕາ, ທະນາຄານແຫ່ງ ສປປ ລາວ ຈະດຳເນີນການຊຳລະສະສາງຜ່ານບັນຊີຂອງທະນາຄານທຸລະກິດທີ່ຮ້ານແລກປ່ຽນເງິນຕາມີບັນຊີເງິນຝາກຢູ່ນຳ.

2. ກໍລະນີເງິນໃນບັນຊີຂອງຜູ້ຊະນະການປະມູນ ມີບໍ່ພຽງພໍໃນການຊຳລະສະສາງ, ກົມບໍລິການທະນາຄານ ຈະປະສານຫາຜູ້ຊະນະການປະມູນ ເພື່ອນຳເງິນເຂົ້າບັນຊີໃຫ້ພຽງພໍຕໍ່ການຊຳລະສະສາງທຸລະກຳ. ຖ້າຜູ້ຊະນະການປະມູນ ນຳເງິນເຂົ້າບັນຊີບໍ່ທັນຕາມກຳນົດຊຳລະສະສາງ ຈະຖືກປັບໄໝບັນຊີແດງ ຕາມທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງຂອງ ທຫລ.

**ມາດຕາ 5** ບັນດາທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮ່ວມທຶນ, ທະນາຄານເອກະຊົນ, ທະນາຄານທຸລະກິດທີ່ເປັນບໍລິສັດລູກຂອງທະນາຄານຕ່າງປະເທດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ຮ້ານແລກປ່ຽນເງິນຕາ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6** ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ ສອນໄຊ ສີພັນດອນ